

ຖະໜົນແຄມຂອງ, ບ້ານພັດທະນາຫຼັກເມືອງ, ນະຄອນປາກເຊ, ແຂວງ ຈຳປາສັກ, 031 214 129, https://www.bol.gov.la/champasak

# ສະຫະພັນກຳມະບານສາຂາທະນາຄານ ແຂວງຈຳປາສັກ ສະຫຼຸບວຽກງານການເຄື່ອນໄຫວ 07 ເດືອນຕົ້ນປີ 2025



ສະຫະພັນກຳມະບານສາຂາທະນາຄານ ແຂວງຈຳປາສັກ ຈັດກອງປະຊຸມສະຫຼຸບວຽກງານກຳມະບານປະຈຳ 07 ເດືອນຕົ້ນປີ 2025 ຂຶ້ນໃນວັນທີ 05 ສິງຫາ 2025 ທີ່ ຫ້ອງປະຊຸມໃຫຍ່ຂອງສາຂາທະນາຄານແຫ່ງ ສປປ ລາວ ພາກໃຕ້ ແຂວງຈຳປາສັກ, ໃຫ້ກຽດເຂົ້າຮ່ວມເປັນຄະນະປະທານຂອງ ທ່ານ ສອນສະຫວັນ ສີວິໄລ, ກຳມະການພັກແຂວງ, ປະທານຄະນະບໍລິຫານງານສະຫະພັນກຳມະບານ ແຂວງຈຳປາສັກ, ທ່ານ ໄຊລືຊາ ຜູຍຍະວົງ ເລຂາຄະນະພັກຮາກຖານ, ຫົວໜ້າສາຂາ ທຫລ ພາກໃຕ້, ພ້ອມດ້ວຍບັນດາທ່ານປະທານ, ຮອງປະທານກຳມະບານຮາກຖານທີ່ຂຶ້ນກັບສະຫະພັນກຳມະບານສາຂາທະນາຄານ ແລະ ສະມາຊິກກຳມະບານເຂົ້າຮ່ວມທັງໝົດ 72 ສະຫາຍ, ຍິງ 35 ສະຫາຍ.

ໃນກອງປະຊຸມ ທ່ານ ບຸນລາ ລ້ອນທຳມະຂັນ ປະທານສະຫະພັນກຳມະບານສາຂາທະນາຄານ ແຂວງຈຳປາສັກ ໄດ້ຜ່ານບົດສະຫຼຸບລາຍງານຜົນການເຄື່ອນໄຫວວຽກງານທີ່ໂດດເດັ່ນໃນໄລຍະ 07 ເດືອນຜ່ານມາ, ເຊິ່ງສະຫະພັນກຳມະບານສາຂາທະນາຄານ ແຂວງຈຳປາສັກ ໄດ້ນຳພາສະມາຊິກເຂົ້າຮ່ວມຮັບຟັງການເຜີຍແຜ່ນະໂຍບາຍຂອງພັກ, ກົດໝາຍຂອງລັດຢ່າງເປັນປົກກະຕິ, ພ້ອມທັງເຄື່ອນໄຫວສ້າງຂະບວນການກິລາ ແລະ ອອກແຮງງານຕາມແຜນການ, ດ້ານວຽກງານແນວຄິດການເມືອງສະມາຊິກກຳມະບານທຸກທ່ານມີທັດສະນະຫຼັກໝັ້ນດ້ານການເມືອງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ, ມີແນວຄິດເປັນເຈົ້າການ ແລະ ຮັບຜິດຊອບສູງຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ. ສະຫະພັນກຳມະບານສາຂາທະນາຄານ ແຂວງຈຳປາສັກ ປະກອບມີ 06 ຮາກຖານ, ມີຄະນະປະທານທັງໝົດ 09 ສະຫາຍ (ຍິງ 05 ສະຫາຍ) ແລະ ມີສະມາຊິກກຳມະບານທັງໝົດ 287 ສະຫາຍ (ຍິງ 138 ສະຫາຍ) ໃນໄລຍະຜ່ານມາ ໄດ້ມີການຂະຫຍາຍສະມາຊິກກຳມະບານເພີ່ມຂຶ້ນ 02 ທ່ານ ແລະ ຮັບສະມາຊິກຈາກການຍົກຍ້າຍມາ 02 ທ່ານ; ນອກຈາກນີ້, ຍັງໄດ້ສິ່ງເສີມມະຫາຊົນກ້າວໜ້າເຂົ້າເປັນສະມາຊິກພັກສຳຮອງ ຈຳນວນ 03 ສະຫາຍ (ຍິງ 01 ສະຫາຍ), ດ້ານການບຳລຸງກໍ່ສ້າງພະນັກງານ ສະມາຊິກໄດ້ຮັບການຍົກລະດັບວິຊາສະເພາະລວມທັງການສຶກສາຕໍ່ໃນລະດັບປະລິນຍາເອກ ແລະ ປະລິນຍາໂທ, ສຳລັບວຽກງານກໍ່ສ້າງນິຕິກຳ ແຕ່ລະຮາກຖານໄດ້ສ້າງກອງທຶນສະຫວັດດີການຂອງຕົນເອງຂຶ້ນ ເພື່ອເປັນນະໂຍບາຍຊ່ວຍເຫຼືອສະມາຊິກໃນກໍລະນີເຈັບເປັນ, ແຕ່ງງານ, ເກີດລູກ, ອັກຄີໄພ ແລະ ອື່ນໆ. ບາງຮາກຖານຍັງມີກອງທຶນອອມຊັບເພື່ອໃຫ້ສະມາຊິກກູ້ຢືມສູງສຸດ 100 ລ້ານກີບ ເພື່ອສ້າງເສດຖະກິດຄອບຄົວ, ທີ່ພັກອາໄສ ຫຼື ທຶນການສຶກສາ.

ໃນດ້ານວຽກງານຄັງເງິນສະຕິ ແລະ ການປະກອບສ່ວນສັງຄົມສະຫະພັນໄດ້ເກັບເງິນສະຕິຈາກສະມາຊິກເປັນປົກກະຕິ ແລະ ໄດ້ເກັບເງິນຈາກສະມາຊິກກອງທຶນຊ່ວຍເຫຼືອເຊິ່ງກັນແລະກັນແລ້ວ ຈຳນວນ 52,500,000 ກີບ, ວຽກງານປ້ອງກັນຄວາມສະຫງົບ ສະມາຊິກກຳມະບານໄດ້ປະກອບສ່ວນໃນການຈັດຕັ້ງກວດກາເວນຍາມ ແລະ ເຂົ້າຮ່ວມປ້ອງກັນເວນຍາມໃນວັນສຳຄັນຕ່າງໆ ຂອງຊາດ, ດ້ານວຽກງານຂະບວນການ ສະມາຊິກໄດ້ເຂົ້າຮ່ວມຂະບວນການກິລາ ແລະ ອະນາໄມລວມ ເພື່ອຕ້ອນຮັບວັນສຳຄັນຕ່າງໆ. ກອງປະຊຸມຍັງໄດ້ເນັ້ນໜັກເຖິງການປະຕິບັດເນື້ອໃນຂໍ້ແຂ່ງຂັນ 05 ເປັນເຈົ້າ ເຊິ່ງປະກອບມີ: ເປັນເຈົ້າການຝຶກຝົນຫຼໍ່ຫຼອມທາງດ້ານການເມືອງ-ແນວຄິດ, ເປັນເຈົ້າການປະຕິບັດກົດໝາຍ ແລະ ລະບຽບການຂອງລັດ, ເປັນເຈົ້າການພັດທະນາຕົນເອງ ແລະ ການຈັດຕັ້ງ, ເປັນເຈົ້າການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ແລະ ເປັນເຈົ້າການປະຕິບັດໜ້າທີ່ວິຊາສະເພາະຢ່າງປະດິດສ້າງ. ທັງໝົດນີ້ແມ່ນເພື່ອສືບຕໍ່ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ສະຫະພັນກຳມະບານຂົງເຂດທະນາຄານ ແຂວງຈຳປາສັກ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດ, ຈາກນັ້ນກໍ່ໄດ້ຍົກໃຫ້ເຫັນຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ບາງບັນຫາທີ່ຈະຕ້ອງໄດ້ພ້ອມກັນແກ້ໄຂໃຫ້ສຳເລັດໃນຕໍ່ໜ້າ.

ຕໍ່ມາກໍ່ໄດ້ຜ່ານ ທິດທາງແຜນການເຄື່ອນໄຫວ 05 ເດືອນທ້າຍປີ 2025 ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານກຳມະບານແຕ່ລະຮາກຖານໄດ້ຮັບການຈັດຕັ້ງຢ່າງຮອບດ້ານ, ສະຫະພັນຈະສືບຕໍ່ສຶກສາອົບຮົມສະມາຊິກກຳມະບານ, ກຳມະກອນ-ລັດຖະກອນ ໃຫ້ມີຫຼັກໝັ້ນຊົນຊັ້ນ, ຍົກສູງຄຸນທາດການເມືອງ ແລະ ຄຸນສົມບັດສົມທຳປະຕິວັດ. ພ້ອມກັນນັ້ນ, ຈະສືບຕໍ່ປັບປຸງ ຂະຫຍາຍການຈັດຕັ້ງກຳມະບານໃຫ້ກວ້າງຂວາງ ເຕົ້າໂຮມຄວາມສາມັກຄີພາຍໃນ-ພາຍນອກໃຫ້ແໜ້ນແກ່ນ ແລະ ສ້າງຂະບວນການຊຸກຍູ້ເພື່ອຊອກແຫຼ່ງລາຍຮັບເຂົ້າຄັງກອງທຶນ. ສະຫະພັນຍັງຈະຊຸກຍູ້ໃຫ້ສະມາຊິກທີ່ຍັງບໍ່ທັນເຂົ້າເປັນສະມາຊິກກອງທຶນຈຳນວນ 45 ສະຫາຍ ໃຫ້ສຳເລັດໃນທ້າຍປີ 2025.

ບົດຂ່າວ: ສະຫະພັນກຳມະບານ ແຂວງຈຳປາສັກ